ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-28 ພຶດສະພາ 2022
ປີທີ 11
ສະບັບທີ 846

## ປະທານ ສພຊ ເນັ້ນໃຫ້ຄະນະນຳແຂວງອັດຕະປື ເອົາໃຈໃສ່ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ




(ສພຊ) ໃນໂອກາດທີ່ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຮ່ວມກັບຄະນະພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ອົງການປົກຄອງແຂວງອັດຕະປື ໃນວັນທີ 3 ພຶດສະພາຜ່ານມານີ້ ໂດຍທ່ານໄດ້ມີຄຳເຫັນໃຫ້ເອົາໃຈໃສ່ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມວ່າ:

ແຂວງອັດຕະປື ເປັນແຂວງທີ່ມີຊາຍແດນທາງບົກຕິດຈອດກັບຕ່າງປະເທດ, ເປັນແຂວງທີ່ມີຊັບພະຍາກອນທຳມະຊາດ ທີ່ມີຄ່າຫລາຍຊະນິດ, ເປັນແຂວງທີ່ມີຫລາຍຊົນເຜົ່າ. ສະນັ້ນ, ຈຶ່ງສະເໜີໃຫ້ຄະນະພັກແຂວງ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ເພີ່ມທະວີຄວາມເອົາໃຈໃສ່ປົກປັກຮັກສາທ້ອງຖິ່ນຂອງຕົນດ້ວຍການຜັນຂະຫຍາຍແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຢ່າງທົ່ວເຖິງ ແລະ ເລິກເຊິ່ງ; ສ້າງ ແລະ ປັບປຸງຕາໜ່າງປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ເຂັ້ມແຂງ,ໜັກແໜ້ນ;ສະກັດກັ້ນອາດສະຍາກຳຕ່າງໆຢ່າງທັນການ, ເດັດຂາດ ແລະ ເຂັ້ມງວດ; ເອົາໃຈໃສ່ການຄຸ້ມຄອງສຳມະໂນຄົວ, ການຄຸ້ມຄອງຄົນຕ່າງປະເທດ ໃຫ້ເຂັ້ມງວດຕາມກົດໝາຍ ແລະ ເປັນແຂວງທີ່ມີເນື້ອທີ່ດິນອຸດົມສົມບູນ, ມີແມ່ນ້ຳລຳເຊຫລາຍສາຍ, ມີຄວາມຊຸ່ມຊື່ນ, ດິນຟ້າອາກາດກໍເອື້ອອຳນວຍໃຫ້ແກ່ການປູກຝັງ ແລະ ລ້ຽງສັດ. ສະນັ້ນ, ຄະນະພັກສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈະຕ້ອງໄດ້ເພີ່ມທະວີການນຳພາ ຊີ້ນຳຂະແໜງການທີ່ກ່ຽວຂ້ອງຂອງແຂວງ ຄົ້ນຄວ້າຄວາມອາດສາມາດທ່າແຮງບົ່ມຊ້ອນຂອງແຂວງຕົນ ເພື່ອສຸມທຶນຮອນ, ເຕັກນິກວິຊາການ ເຂົ້າໃສ່ການຜະລິດເປັນສິນຄ້າຂອງປະຊາຊົນ ເປັນຕົ້ນແມ່ນການປູກໄມ້ໃຫ້ໝາກ, ການປູກໄມ້ອຸດສາຫະກຳ, ການປູກຜັກປອດສານພິດ, ການປູກ

ອ່ານຕໍ່ໜ້າ 3

## ປຸກລະດົມຂະບວນສັກວັກຊີນໃຫ້ຄົບເປົ້າໝາຍ

ມາຮອດປັດຈຸບັນນີ້ ປະເທດເຮົາໄດ້ເປີດເຕັມຮູບແບບແລ້ວ, ການເຂົ້າ-ອອກປະເທດກໍ ເລີ່ມຄຶກຄັກແລ້ວ, ຫາກຕິດຕາມຂ່າວກໍຈະເຫັນວ່າໂຕເລກຜູ້ຕິດເຊື້ອທົ່ວປະເທດ ກໍຄືຢູ່ນະຄອນຫລວງວຽງຈັນ ກໍຫລຸດຜ່ອນລົງມາເປັນສອງໂຕເລກມີບາງແຂວງ ຕົວເລກເປັນສູນແລ້ວກໍມີ.

ແຕ່ເຖິງຢ່າງໃດກໍຕາມ ພວກເຮົາກໍຕ້ອງໄດ້ສືບຕໍ່ດຳລົງຊີວິດປົກກະຕິແບບໃໝ່ (NEWNORMAL) ເຊັ່ນ: ການໃສ່ຜ້າອັດປາກ-ດັງ; ການໝັ່ນລ້າງມືດ້ວຍສະບູ, ເຈວ ຫລື ເຫລົ້າ 70% ເລື້ອຍໆ; ການຮັກສາໄລຍະຫ່າງໃນສັງຄົມ ແລະ ຫລີກລ່ຽງໄປບ່ອນທີ່ມີຄົນແອອັດ, ເຂດທີ່ມີຄວນສ່ຽງ; ການຊຸມແຊວ ຫລື ງານບຸນປະເພນີ, ງານດອງຕ່າງໆ ເພາະບໍ່ຮູ້ວ່າພະຍາດລະບາດນີ້ ມັນຈະໝົດໄປຈາກພວກເຮົາຍາມໃດ? ໄປຄຽງຄູ່ກັນນີ້, ພວກເຮົາກໍຕ້ອງສືບຕໍ່ລະດົມກັນສັກວັກຊີນໃຫ້ຄົບຕາມໄປດ້ວຍເຂັມກະຕຸ້ນ (Boosrer dose) ຮອບ 1 (ເຂັມ 3) ແລະ ເຂັມກະຕຸ້ນຮອບ 2 (ເຂັມ 4).

ກ່ອນໜ້ານີ້, ກໍມີຄຳສັ່ງເລກທີ 24/ນອ, ລົງວັນທີ 10 ພະຈິກ 2021 ຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີການສັກວັກຊີນກັບພະຍາດໂຄວິດ-19; ໃນແງ່ວິຊາການທາງກົມອະນາໄມ; ສົ່ງເສີມສຸຂະພາບ, ກະຊວງສາທາລະນາສຸກ ກໍມີແຈ້ງການເຖິງພະແນກສາທາລະນະສຸກນະຄອນຫລວງ ແລະ ບັນດາແຂວງແລ້ວ.

ອີງຕາມຂໍ້ມູນຈາກຄະນະສະເພາະກິດ ຮອດວັນທີ 04 ພຶດສະພາ 2022 ນີ້ ຕົວເລກຜູ້ຮັບວັກຊີນເຂັມທີ 1 ແມ່ນ 5.783.172 ຄົນ ກວມອັດຕາປົກຄຸມ 78,81%; ສ່ວນຕົວເລກຜູ້ຮັບວັກຊີນຄົບແມ່ນ 4.928.909 ຄົນ ກວມອັດຕາປົກຄຸມ 67,17% ຈາກຕົວເລກນີ້ ຫາກທຽບໃສ່ສາກົນແລ້ວແມ່ນເພິ່ນຢາກໃຫ້ການສັກວັກຊີນຄົບກວມຕັ້ງແຕ່ 70% ຂຶ້ນໄປ ຈຶ່ງຖືວ່າປອດໄພ; ເພິ່ນຖືວ່າເປັນພູມຕ້ານທານລວມໝູ່ (Herd Immunity) ເມື່ອເປັນເຊັ່ນນີ້ແລ້ວ ການປຸກລະດົມກັນໄປສັກວັກຊີນ ຍັງຄົງສືບຕໍ່ໄປເລື້ອຍໆ ເຊິ່ງວ່າຕົວເລກຜູ້ຕິດເຊື້ອກໍໜ້ອຍລົງ; ການປິ່ນປົວດີໄວຂຶ້ນຍ້ອນພວກເຮົາມີຢາປິ່ນປົວກໍຕາມ ບໍ່ວ່າການສັກເຂັມ 1, ເຂັມ 2 ຫລື ເຂັມກະຕຸ້ນ (Boosrer dose) ຮອບທີ 1 ແລະ ຮອບທີ 2.

ຢາກໃຫ້ເຂົ້າໃຈແບບວິທະຍາສາດວ່າ: ການສັກວັກຊີນຄົບ ແລະ ຕາມດ້ວຍເຂັມກະຕຸ້ນຮອບທີ 1 (ເຂັມ 3) ແລະ ຮອບທີ 2 (ເຂັມ 4) ນັ້ນ ບໍ່ແມ່ນປ້ອງກັນການຕິດເຊື້ອໂຄວິດ-19 ໄດ້ 100% ເນີ! ມັນມີໂອກາດຕິດເຊື້ອໄດ້ຫາກເຮົາບໍ່ປ້ອງກັນຕົນເອງຢ່າງເຂັ້ມງວດ ແຕ່ຫາກຕິດເຊື້ອແລ້ວຈະບໍ່ຮຸນແຮງ ການປິ່ນປົວກໍດີໄວທັງຫລຸດຜ່ອນການເສຍຊີວິດອີກດ້ວຍ.

ຂໍຮຽກຮ້ອງໃຫ້ໝົດທຸກທ່ານຊ່ວຍລະດົມກັນໄປຮັບວັກຊີນໃຫ້ຄົບ.

## ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມ




(ສພຊ) ວັນທີ 18 ພຶດສະພາ 2022 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ທ່ານ ຄຳປະສິດ ເທບວົງສາ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ໄດ້ສຳເລັດເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືສະມາຊິກລັດຖະສະພາໜຸ່ມ (ໃນຮູບແບບທາງໄກ) ພາຍໃຕ້ການເປັນເຈົ້າພາບຂອງສະພາສູງແຫ່ງສະຫະພັນລັດເຊຍ ໂດຍການເປັນປະ

ອ່ານຕໍ່ໜ້າ 2

## ຕິດຕາມກວດກາໂຄງການກໍ່ສ້າງອາຄານສະພາປະຊາຊົນແຂວງຜົ້ງສາລີ

(ສພຊ) ເພື່ອຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຂອງສະພາແຫ່ງຊາດທີ່ມີຢູ່ສູນກາງ ແລະ ທ້ອງຖິ່ນ ຮ່ວມກັບຄະນະກວດກາຂອງອົງການກວດກາແຫ່ງລັດ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ໂດຍສະເພາະແມ່ນກວດກາທາງດ້ານເອກະສານການຈັດຕັ້ງປະຕິບັດໂຄງການ ແລະ ກວດກາພາກສະໜາມຕົວຈິງ ທັງເພື່ອເກັບກຳຂໍ້ມູນຕົວຈິງ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາທີ່ຍັງຄ້າງຄາໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການກໍ່ສ້າງຕຶກສະພາປະຊາຊົນ

ອ່ານຕໍ່ໜ້າ 2




ໜ້າ 4

ໜ້າ 7


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5




## ຄະນະ...

ທານກອງປະຊຸມຂອງປະທານສະພາສູງ, ມີບັນດາສະມາຊິກລັດຖະສະພາໜຸ່ມຂອງສະຫະພັນລັດເຊຍ, ສປຈີນ, ອິນໂດເນເຊຍ ແລະ ສະມາຊິກລັດຖະສະພາໜຸ່ມຈາກບັນດາປະເທດ (ປະເທດໃນກຸ່ມ CIS) ເຂົ້າຮ່ວມຫລາຍກວ່າ 45 ທ່ານ.

ກອງປະຊຸມດັ່ງກ່າວ, ຈັດຂຶ້ນເນື່ອງໃນໂອກາດສະເຫລີມສະຫລອງ ຄົບຮອບ 10 ປີ ຂອງຄະນະສະມາຊິກລັດຖະສະພາໜຸ່ມ ແຫ່ງ ສະພາສູງສະຫະພັນລັດເຊຍ ໂດຍມີຈຸດປະສົງເພື່ອສ້າງເວທີປຶກສາຫາລື, ແລກປ່ຽນບົດຮຽນ ແລະ ເພີ່ມທະວີການຮ່ວມມືກັນ ລະຫວ່າງສະມາຊິກລັດຖະສະພາໜຸ່ມ ແນໃສ່ບັນຫາ ແລະ ນະໂຍບາຍເພື່ອສົ່ງເສີມການພັດທະນາຊາວໜຸ່ມໃນຂະແໜງການຕ່າງໆ. ໃນກອງປະຊຸມຄັ້ງນີ້, ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ນຳສະເໜີບົດຮຽນຕໍ່ຫລາຍບັນຫາສຳຄັນເຊັ່ນ: ບົດບາດການຮ່ວມມືສາກົນຂອງຊາວໜຸ່ມເພື່ອຍົກສູງຄວາມສາມັກຄີລະຫວ່າງຊົນຊາດ ແລະ ຊົນເຜົ່າ; ການປັບປຸງກົດໝາຍໃນສະພາບການໂລກທີ່ມີສິ່ງທ້າທາຍໃໝ່: ມຸມມອງຂອງນັກກົດໝາຍໜຸ່ມ; ການຫັນເປັນລະບົບດີຈີຕອນ ແລະ ການພັດທະນາລະບົບອຸດສາຫະກຳໄອທີ; ຊາວໜຸ່ມເປັນຜູ້ຂັບເຄື່ອນການພັດທະນາຊົນນະບົດ ແລະ ການສ້າງສຸຂະພາບທີ່ດີໃນສັງຄົມ ເຊິ່ງຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ກໍໄດ້ມີການນຳສະເໜີບົດຮຽນ ແລະ ແລກປ່ຽນສົນທະນາກັນຢ່າງສ້າງສັນ ແລະ ກົງໄປກົງມາ ເຮັດໃຫ້ກອງປະຊຸມມີບັນຍາກາດທີ່ດີ, ໄມຕີຈິດ, ມິດຕະພາບ ແລະ ການຮ່ວມມື.

## ຕິດຕາມ...

ແຂວງ ແລະ ໂຄງການທຶນສົມທົບກໍ່ສ້າງຕຶກສະພາແຫ່ງຊາດຫລັງໃໝ່ໃນໄລຍະຜ່ານມາຮອດປະຈຸບັນ.

ໃນວັນທີ 12 ພຶດສະພາຜ່ານມາ, ທ່ານ ນາງ ອ້ອມປະຊາ ໄຊຍະກຸມມານ ຮອງຫົວໜ້າກົມກວດກາສະພາແຫ່ງຊາດ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຂອງສະພາແຫ່ງຊາດ; ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄດ້ຈັດກອງປະຊຸມຮ່ວມລະຫວ່າງຄະນະຮັບຜິດຊອບຕິດຕາມກວດກາຈາກຄະນະເລຂາທິການສະພາແຫ່ງຊາດ, ຄະນະກວດກາຈາກອົງກວດກາແຫ່ງລັດ, ຄະນະຮັບຜິດຊອບກວດກາຂອງສະພາປະຊາຊົນແຂວງ ແລະ ພະແນກການຂອງແຂວງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ເພື່ອປຶກສາຫາລືການຈັດຕັ້ງປະຕິບັດໂຄງການກໍ່ສ້າງອາຄານສະພາປະຊາຊົນແຂວງຜົ້ງສາລີ;

ໃນກອງປະຊຸມ, ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງຜົ້ງສາລີ ໄດ້ລາຍງານຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດໂຄງການກໍ່ສ້າງອາຄານສະພາປະຊາຊົນແຂວງຜົ້ງສາລີ ເຊິ່ງໂຄງການດັ່ງກ່າວໄດ້ດຳເນີນການກໍ່ສ້າງນັບແຕ່ປີ 2014 ແລະ ສຳເລັດໃນປີ 2018 ຕາມແຜນການ ແລະ ມີມູນຄ່າໂຄງການກໍ່ສ້າງລວມທັງໝົດ 40.538.347.819 ກີບ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ປຶກຫາລືການຈັດຕັ້ງປະຕິບັດທີ່ເຫັນວ່າຍັງເປັນບັນຫາ, ຍັງບໍ່ທັນສອດຄອງຕາມລະບຽບການ ເປັນຕົ້ນບັນດາເອກະສານທີ່ກ່ຽວຂ້ອງກັບໂຄງການກໍ່ສ້າງອາຄານສະພາປະຊາຊົນແຂວງຜົ້ງສາລີ; ພ້ອມດຽວກັນນັ້ນ, ຍັງໄດ້ລົງກວດກາການກໍ່ສ້າງອາຄານຕົວຈິງ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



# ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

❑ ບໍ່ຄຳ-ທອງ ເຊໂປນ ຂອງບໍລິສັດລ້ານຊ້າງ ມິເນໂຣນສ໌ ລິມິເຕັດ ໄດ້ເປີດບໍ່ແຮ່ໃຕ້ດິນທັນສະໄໝແຫ່ງທຳອິດ ໃນ ສປປລາວ ທີ່ສອດຄ່ອງກັບຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໂຄງການບໍ່ຄຳ-ທອງ ເຊໂປນ ມີປະຫວັດສາດການຂຸດຄົ້ນບໍ່ແຮ່ມາຫລາຍພັນປີ ເຊິ່ງການສຳຫລວດໃຕ້ດິນຢູ່ບໍ່ຄຳ-ທອງ ເຊໂປນ ຄາດວ່າການຜະລິດຈາກການຂຸດຄົ້ນບໍ່ແຮ່ໃຕ້ດິນຈະເລີ່ມໃນກາງປີ 2023 ບໍ່ໃຕ້ດິນຈະຂະຫຍາຍເຖິງ 450 ແມັດໃຕ້ໜ້າດິນ ທາງເຂົ້າອຸມົງເພື່ອເຈາະສຳຫລວດໃຕ້ດິນ ຈະມີຄວາມຍາວຫລາຍກວ່າ 1.800 ແມັດ, ສູງ 5 ແມັດ, ກ້ວາງ 5 ແມັດ ເພື່ອອຳນວຍໃຫ້ລົດຈົກ ແລະ ເຄື່ອງເຈາະທີ່ທັນສະໄໝດ້ວຍປະລິມານສະສົມແຮ່ເພື່ອສຳຫລວດ ທີ່ມີຫລາຍກວ່າ 9,5 ລ້ານໂຕນ ແລະ ການຜະລິດແຮ່ທີ່ຄາດວ່າຈະເພີ່ມຂຶ້ນຈາກ 400.000 ໂຕນ ໃນປີ 2023 ເປັນ 1,2 ລ້ານໂຕນ/ປີ ແລະ ຄາດວ່າຈະຂະຫຍາຍບໍ່ຄຳ-ທອງ ເຊໂປນ ໄປອີກ 7 ປີ ຈົນເຖິງປີ 2030.

**ນສພ. ວຽງຈັນໃໝ່ 19/05/2022**

❑ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປລາວ ໃຫ້ຮູ້ວ່າ: ມູນຄ່າການນຳເຂົ້າ ແລະ ສົ່ງອອກຂອງ ສປປລາວ ປະຈຳເດືອນເມສາ 2022 ບັນລຸໄດ້ປະມານ 950 ລ້ານໂດລາ (ບໍ່ກວມເອົາມູນຄ່າການສົ່ງອອກໄຟຟ້າ) ໃນນັ້ນ, ມູນຄ່າການສົ່ງອອກປະມານ 424 ລ້ານໂດລາ, ມູນຄ່າການນຳເຂົ້າປະມານ 526 ລ້ານໂດລາ ແລະ ຂາດດຸນການຄ້າປະມານ 102 ລ້ານໂດລາ ແລະ ສິນຄ້າສົ່ງອອກຫລັກ ປະກອບມີ: ຄຳປະສົມ, ຄຳແທ່ງ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ແຮ່ທອງ ແລະ ອື່ນໆ ສ່ວນປະເທດທີ່ ສປປລາວ ສົ່ງອອກຫລັກປະກອບມີ: ສປ ຈີນ, ຫວຽດນາມ, ໄທ, ອົດສະຕຣາລີ ແລະ ສະວິດເຊີແລນ.

**ນສພ. ປະເທດລາວ 20/05/2022**

❑ ອີງຕາມຂໍ້ມູນຈາກຫ້ອງການຄະນະຄຸ້ມຄອງລະເບີດແຫ່ງຊາດລາວ ໃຫ້ຮູ້ວ່າ: ໃນຊຸມປີຜ່ານມາມີປະຊາຊົນຜູ້ຖືກເຄາະຮ້າຍຈາກລະເບີດທີ່ບໍ່ທັນແຕກທີ່ຕົກຄ້າງແຕ່ປາງສົງຄາມຢູ່ ສປປລາວ ສະເລ່ຍ 40 ຄົນຕໍ່ປີ ເນື່ອງຈາກໃນລະຫວ່າງຊຸມປີ 1964-1973 ສະໄໝສົງຄາມຖ້ຽວບິນຂອງອາເມລິກາໄດ້ຂົນລະເບີດມາຖິ້ມໃສ່ແຜ່ນດິນລາວຫລາຍກວ່າ 580.000 ຖ້ຽວ, ບັນຈຸລູກລະເບີດເກືອບ 3 ລ້ານໂຕນ ແລະ ຄາດຄະເນວ່າມີລະເບີດລູກຫວ່ານປະມານ 270 ລ້ານ ໜ່ວຍ ແລະ ຊະນິດອື່ນໆ; ໃນນັ້ນ ຍັງມີລູກລະເບີດປະມານ 30% ທີ່ຍັງບໍ່ທັນແຕກ ແລະ ຍັງຢາຍຢູ່ຕາມພື້ນທີ່ຕ່າງໆ ໃນຂອບເຂດທົ່ວປະເທດ.

**ນສພ. ປະເທດລາວ 20/05/2022**

❑ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ ) ແລະ ກະຊວງການເງິນ ເປີດເຜີຍຜົນການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ ແລະ ນິຕິກຳທີ່ກ່ຽວຂ້ອງເຫັນວ່າມີຄວາມຄືບໜ້າດີສົມຄວນ ໂດຍທຸກພາກສ່ວນໄດ້ສຳເລັດການແຕ່ງຕັ້ງຄະນະຮັບຜິດຊອບວຽກງານດັ່ງກ່າວ ແລະ ສຳເລັດການເຜີຍແຜ່ເນື້ອໃນຂອງດຳລັດ ແລະ ນິຕິກຳທີ່ກ່ຽວຂອງ ໂດຍຕິດພັນກັບການເຮັດວຽກງານການເມືອງແນວຄິດໃຫ້ແກ່ພະນັກງານ-ລັດຖະກອນ. ພ້ອມດຽວກັນນັ້ນ, ໄດ້ເລັ່ງສັງລວມຂຶ້ນບັນຊີລົດຂອງລັດ ທີ່ກະຊວງ-ອົງການຂອງຕົນຄຸ້ມຄອງ ແລະ ນຳໃຊ້ເປັນຕົ້ນຈຳນວນລົດ, ຊະນິດ-ປະເພດລົດ (ລົດປະຈຳຕຳແໜ່ງການນຳລະດັບສູງ, ລົດບໍລິຫານ ແລະ ລົດວິຊາສະເພາະ), ຜູ້ໃຊ້ລົດ, ສະພາບລົດ ແລະ ອື່ນໆ; ລວມທັງແຜນການຈັດສັນລົດຄືນໃໝ່ ແລະ ແຜນການສະສາງລົດເກົ່າທີ່ໝົດອາຍຸການໃຊ້ງານ ແລະ ໄດ້ຖອນຄືນລົດຈຳນວນໜຶ່ງທີ່ເກີນກຳນົດໃນດຳລັດເລກທີ 599/ລບ.

**ນສພ. ປະເທດລາວ 20/05/2022**

## ປະທານ...

ຫຍ້າເພື່ອລ້ຽງສັດ, ການລ້ຽງສັດໃຫຍ່ເປັນສິນຄ້າ ທັງເປັນການສ້າງວຽກເຮັດງານທຳ, ສ້າງອາຊີບທີ່ໝັ້ນຄົງ, ເຮັດໃຫ້ພໍ່ແມ່ປະຊາຊົນມີລາຍຮັບ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນນັບມື້ດີຂຶ້ນ; ຫັນການຜະລິດກະສິກຳແບບກະແຈກກະຈາຍໄປສູ່ກຸ່ມການຜະລິດ ຫລື ການຜະລິດແບບສະຫະກອນແບບໃໝ່ ເພື່ອຂະຫຍາຍຖານການຜະລິດໃຫ້ກວ້າງໃຫຍ່ ແລະ ມີຜົນຜະລິດຈຳນວນຫລາຍ ສະໜອງໃຫ້ຕະຫລາດພາຍໃນ ແລະ ຕ່າງປະເທດ; ດ້ານການພັດທະນາຊັບພະຍາກອນມະນຸດ ເປັນວຽກງານທີ່ມີຄວາມສຳຄັນ ແລະ ເປັນຂໍກຸນແຈໃຫ້ແກ່ການພັດທະນາຂະແໜງການອື່ນ, ຖ້າແຂວງເຮົາມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ກໍຈະເຮັດໃຫ້ການສ້າງສາພັດທະນາເສດຖະກິດ-ສັງຄົມມີປະສິດທິຜົນສູງ. ການພັດທະນາຊັບພະຍາກອນມະນຸດ ສິ່ງສຳຄັນແມ່ນການສ້າງບຸກຄະລາກອນ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ເພື່ອແກ້ໄຂໃຫ້ໄດ້ຢ່າງຂາດຕົວ ກໍລະນີແຕ່ລະປີມີລູກຫລານຮຽນຈົບວິຊາສະເພາະຂະແໜງຕ່າງໆຈຳນວນບໍ່ໜ້ອຍ ຫາວຽກເຮັດງານທຳບໍ່ໄດ້, ແຕ່ກົງກັນຂ້າມບັນດາຫົວໜ່ວຍວິສາຫະກິດຕ່າງໆ ຊໍ້າພັດນຳເຂົ້າແຮງງານມາຈາກທາງອື່ນ ຫລື ມາຈາກຕ່າງປະເທດ. ພ້ອມກັນນັ້ນ, ກໍໃຫ້ເອົາໃຈໃສ່ການສຶກສາອົບຮົມ ແລະ ຮຽນຮູ້ມູນເຊື້ອຄວາມສາມັກຄີປອງດອງ, ນ້ຳໃຈຮັກຊາດ ແລະ ນ້ຳໃຈເສຍສະຫລະ ເພື່ອຜົນປະໂຫຍດສ່ວນລວມ, ສ້າງສະຕິເຄົາລົບກົດໝາຍ, ການປະຕິບັດພັນທະຂອງປະຊາຊົນ; ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງອັດຕະປືມາຮອດປີນີ້ກໍກ້າວເຂົ້າສູ່ສະພາປະຊາຊົນແຂວງ ຊຸດທີ II ແລ້ວ ແຕ່ຖ້າທຽບໃສ່ການເຄື່ອນໄຫວຂອງອົງການຈັດຕັ້ງອື່ນພາຍໃນແຂວງ ກໍຖືວ່າຍັງໃໝ່; ບົດຮຽນ, ປະສົບການຍັງບໍ່ທັນຫລາຍ; ການຮັບຮູ້ຂອງຂະແໜງການອື່ນ ຕໍ່ສະພາປະຊາຊົນແຂວງ ບາງດ້ານກໍຍັງບໍ່ທັນເລິກເຊິ່ງ ສະເໜີໃຫ້ຄະນະພັກແຂວງອັດຕະປື ເພີ່ມທະວີຄວາມເອົາໃຈໃສ່ນຳພາ-ຊີ້ນຳ ເຮັດໃຫ້ສະພາປະຊາຊົນແຂວງ ສາມາດປະຕິບັດສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍໃຫ້ໄດ້ຢ່າງຄົບຖ້ວນ; ນຳພາຊີ້ນຳອົງການປົກຄອງແຂວງ, ບັນດາພະແນກການ ໃນການປະສານສົມທົບວຽກງານ ກັບສະພາປະຊາຊົນແຂວງ ໂດຍສະເພາະການກະກຽມເນື້ອໃນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງ, ການພິຈາລະນາຮັບຮອງນິຕິກຳທີ່ສຳຄັນຂອງແຂວງ ລວມທັງການເຄື່ອນໄຫວຕິດຕາມກວດກາຂອງສະພາປະຊາຊົນແຂວງອັດຕະປື ໃຫ້ສາມາດປະຕິບັດໄດ້ຕາມກົດໝາຍ ເຊິ່ງຈະເປັນຂໍ້ມູນໃຫ້ຄະນະພັກແຂວງ ໃນການປັບປຸງແກ້ໄຂບັນຫາຕ່າງໆໄດ້ຢ່າງຖືກຕ້ອງ. ການກຳນົດກົງຈັກເສນາທິການຂັ້ນຂະແໜງການ ລວມທັງບຸກຄະລາກອນ ຂອງສະພາປະຊາຊົນແຂວງ ກໍສະເໜີໃຫ້ຄະນະພັກ, ອົງການປົກຄອງແຂວງ ເອົາໃຈໃສ່ຊີ້ນຳຂະແໜງການທີ່ກ່ຽວຂ້ອງຂອງແຂວງ ອຳນວຍຄວາມສະດວກ ເພື່ອເຮັດໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນແຂວງອັດຕະປື ເປັນລະບົບຄົບຊຸດ ແລະ ຮັບປະກັນການປະຕິບັດໜ້າທີ່ວຽກງານ ແລະ ການປະສານສົມທົບວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງກັບສະພາປະຊາຊົນແຂວງ ມີຄວາມສຳຄັນຕໍ່ປະສິດທິພາບການປະຕິບັດໜ້າທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຢູ່ແຂວງຂອງຕົນ. ສະນັ້ນ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຈະຕ້ອງເຮັດໜ້າທີ່ໃນການເກັບກຳ, ສັງລວມເອົາບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງທ້ອງຖິ່ນນຳໄປສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາ, ຊອກຫາວິທີການແກ້ໄຂ. ພາຍຫລັງກອງປະຊຸມສະພາແຫ່ງຊາດ ຕົກລົງເປັນມະຕິກອງປະຊຸມສະພາແຫ່ງຊາດແລ້ວ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ກໍນຳເອົາການຕົກລົງຂອງສະພາແຫ່ງຊາດ ມາສົມທົບກັບສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈັດຕັ້ງປະຕິບັດ ລວມທັງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດ. ສະນັ້ນ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈະຕ້ອງໄດ້ປະຊຸມເພື່ອປຶກສາຫາລືວຽກງານຮ່ວມກັນຢ່າງເປັນປົກກະຕິ.



ສຳລັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊິ່ງແມ່ນການແກ້ໄຂບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນຂອງຊາດ ທີ່ສະສົມມາຫລາຍປີ ເປັນພັນທະ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ ໃນການນຳພາ-ຊີ້ນຳບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມ ກໍຄືປະຊາຊົນລາວບັນດາເຜົ່າ ໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ ແລະ ເປັນວິທີທາງດຽວທີ່ຈະແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງປະເທດ ໃຫ້ຜ່ອນຄາຍລົງເປັນກ້າວໆ. ສະນັ້ນ, ຈຶ່ງສະເໜີໃຫ້ບັນດາສະຫາຍ ຄະນະພັກແຂວງ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງອັດຕະປື ເພີ່ມທະວີການໂຄສະນາເຜີຍແຜ່ ແລະ ນຳພາຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ໄດ້ຮັບຜົນສຳເລັດ ແລະ ຖືເອົາການຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວ ເປັນສະໜາມຮົບທາງດ້ານເສດຖະກິດ, ເປັນພາລະກິດທົ່ວປວງຊົນ ເຊິ່ງສະມາຊິກພັກ, ພະນັກງານ-ລັດຖະກອນ ກໍຄືພໍ່ແມ່ປະຊາຊົນບັນດາເຜົ່າ ຈະຕ້ອງໄດ້ຮ່ວມແຮງຮ່ວມໃຈກັນ ຈັດຕັ້ງປະຕິບັດ ແລະ ເປັນວິທີທາງດຽວທີ່ຈະນຳພາປະເທດຊາດໃຫ້ຫລຸດພົ້ນຈາກສະພາບວິກິດການທາງດ້ານເສດຖະກິດ; ເອົາໃຈໃສ່ຕິດຕາມ, ຊຸກຍູ້ ການສ້າງຖານການຜະລິດໃຫ້ມີຄວາມໝັ້ນຄົງ ແລະ ມີຈຳນວນເພີ່ມຂຶ້ນ ເພື່ອເປັນກຳລັງແຮງໃຫ້ແກ່ການເກັບລາຍຮັບ; ສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການຄ້າ ແລະ ການລົງທຶນ ເພື່ອຍູ້ແຮງງານຜະລິດ ຕາມທິດສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດພາຍໃນ, ເພີ່ມການສົ່ງອອກໃຫ້ຫລາຍຂຶ້ນ, ຄົ້ນຄວ້າກຳນົດຜະລິດຕະພັນທີ່ເປັນທ່າແຮງຂອງແຂວງ ແລະ ກຳນົດເຂດທີ່ຈະຜະລິດຢ່າງລະອຽດ; ເພີ່ມທະວີການຄຸ້ມຄອງການເກັບລາຍຮັບງົບປະມານບໍ່ໃຫ້ຮົ່ວໄຫລດ້ວຍການນຳໃຊ້ເຄື່ອງມືທີ່ທັນສະໄໝ; ການໃຊ້ຈ່າຍງົບປະມານຕ້ອງປະຢັດມັດທະຍັດ ເພື່ອຮັບປະກັນການຊຳລະໜີ້ສິນທີ່ໜັກໜ່ວງ; ຈັດຕັ້ງປະຕິບັດມາດຕະການໃຫ້ວິສາຫະກິດທຸກປະເພດ ຫັນມາຖືບັນຊີທີ່ຖືກຕ້ອງ ເພື່ອກ້າວໄປສູ່ການກວດສອບທີ່ໂປ່ງໃສ; ປະຕິບັດມາດຕະການຢ່າງເຂັ້ມງວດ ຕໍ່ພະນັກງານລັດ ແລະ ຜູ້ປະກອບການທີ່ເຮັດຜິດກົດໝາຍ ແລະ ລະບຽບວິໄນແຜນການ-ການເງິນ; ເອົາໃຈໃສ່ການຄຸ້ມຄອງລາຍຈ່າຍ ແລະ ຈັດຕັ້ງປະຕິບັດບັນດາມາດຕະການປະຢັດ, ເຂັ້ມງວດວິໄນລາຍຈ່າຍ, ປະຢັດລາຍຈ່າຍບໍລິຫານ ແລະ ການລົງທຶນຂອງລັດ, ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃຫ້ຮັບປະກັນມູນຄ່າການລົງທຶນ ສອດຄ່ອງກັບຄຸນນະພາບຂອງການກໍ່ສ້າງ, ບໍ່ໃຫ້ລັດເສຍຜົນປະໂຫຍດ; ຄະນະພັກແຕ່ລະຂັ້ນ ຕ້ອງເປັນແບບຢ່າງໃນການປະຢັດ ແລະ ຕ້ານການຟຸມເຟືອຍ ໂດຍສະເພາະການປະກອບ ແລະ ນຳໃຊ້ພາຫະນະ, ແກ້ໄຂການຈັດຊື້-ຈັດຈ້າງທີ່ມີມູນຄ່າສູງເກີນຄວາມເປັນຈິງ ແລະ ບໍ່ຖືກຕາມລະບຽບການເງິນ; ສຶກສາອົບຮົມໃຫ້ທົ່ວສັງຄົມ ມີສະຕິປະຢັດໃນການຊົມໃຊ້ໃນຄົວເຮືອນ, ການຊຸມແຊວ, ການຈັດງານຮີດຄອງປະເພນີ, ການພົບປະສ້າງສັນ ເຮັດໃຫ້ກາຍເປັນຄ່ານິຍົມໃໝ່ທີ່ບໍ່ຖືກຕ້ອງຂອງຄົນລາວ.

ພ້ອມນັ້ນ, ທ່ານປະທານສະພາແຫ່ງຊາດ ຍັງໄດ້ເນັ້ນກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ວ່າ: ເພື່ອເຮັດໃຫ້ການແກ້ໄຂບັນຫາຢາເສບຕິດ ໄດ້ຮັບຜົນດີນັ້ນ ວຽກງານທີ່ຈະຕ້ອງໄດ້ເອົາໃຈໃສ່ແມ່ນປຸກລະດົມຂົນຂວາຍໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ເຫັນໄດ້ຜົນຮ້າຍຂອງບັນຫາຢາເສບຕິດ ທີ່ມີຕໍ່ປະເທດຊາດ, ສັງຄົມ, ຄອບຄົວ ກໍຄືສຸຂະພາບຂອງລູກຫລານ ແລະ ພ້ອມກັນເຂົ້າຮ່ວມໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢ່າງຕັ້ງໜ້າ; ຖືເອົາການແກ້ໄຂບັນຫາຢາເສບຕິດ ຕິດພັນກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການສົ່ງເສີມການຜະລິດ, ສ້າງວຽກເຮັດງານທຳ, ການສ້າງລາຍໄດ້ແກ່ປະຊາຊົນ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ; ຄະດີຢາເສບຕິດ ຕ້ອງດຳເນີນຢ່າງເຂັ້ມງວດ, ເດັດຂາດ, ຕັດສິນລົງໂທດຜູ້ມີສ່ວນຮ່ວມໃນການກະທຳຜິດກ່ຽວກັບຢາເສບຕິດ ຕາມກົດໝາຍ, ບໍ່ໃຫ້ມີສະພາບການຜ່ອນສັ້ນ ຜ່ອນຍາວ ໃນການດຳເນີນຄະດີຢາເສບຕິດ; ເພີ່ມທະວີຄວາມເອົາໃຈໃສ່ໃຫ້ເຂັ້ມງວດ ແລະ ປະຕິບັດໃຫ້ຖືກຕ້ອງ, ຄົບຖ້ວນຕາມກົດໝາຍ ກ່ຽວກັບການແກ້ໄຂຂອງກາງໃນຄະດີຢາເສບຕິດ ເພື່ອນຳເຂົ້າເປັນງົບປະມານແຫ່ງລັດ; ເອົາໃຈໃສ່ວຽກງານການບຳບັດຜູ້ຕິດຢາເສບຕິດ ຕິດພັນກັບການປິ່ນປົວ, ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ກັບການດັດສ້າງ ແລະ ການເຝິກສີມື, ເຝິກອາຊີບໃຫ້ແກ່ຜູ້ບຳບັດ; ປັບປຸງສູນ, ສະຖານທີ່ບຳບັດ ໃຫ້ຮັບປະກັນ, ປະກອບແພດໝໍ, ບຸກຄະລາກອນທີ່ກ່ຽວຂ້ອງໃຫ້ຄົບຖ້ວນ.

ດ້ານມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ-19 ແລະ ການທ່ອງທ່ຽວສີຂຽວ ແມ່ນໃຫ້ຄະນະພັກແຂວງ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ສືບຕໍ່ເອົາໃຈໃສ່ຊີ້ນຳອົງການປົກຄອງແຕ່ລະຂັ້ນ ຕິດຕາມ, ເກັບກຳຂໍ້ມູນ ການລະບາດຂອງພະຍາດໂຄວິດ-19 ຢູ່ແຕ່ລະທ້ອງຖິ່ນ ເພື່ອສາມາດກຳໄດ້ສະພາບ ແລະ ແກ້ໄຂບັນຫາໃຫ້ທັນເວລາ; ເພີ່ມທະວີການນຳພາ-ຊີ້ນຳຂະແໜງການທີ່ກ່ຽວຂ້ອງ ໃນການກວດຫາເຊື້ອ, ການປິ່ນປົວຜູ້ຕິດເຊື້ອດ້ວຍຄວາມເອົາໃຈໃສ່ ເພື່ອຮັບປະກັນເຮັດໃຫ້ການລະບາດຂອງພະຍາດ ຢູ່ໃນຂອບເຂດຈຳກັດ ແລະ ການປິ່ນປົວຜູ້ຕິດເຊື້ອໃຫ້ຫາຍດີໄວ; ຕິດຕາມ, ຊຸກຍູ້ ພໍ່ແມ່ປະຊາຊົນພາຍໃນແຂວງ ໃນການສັກຢາວັກຊີນໃຫ້ຄົບຖ້ວນ ແລະ ບັນລຸຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ວາງອອກ ຄື ໃນປີ 2021 ໃຫ້ບັນລຸໄດ້ 70% ຂອງກຸ່ມເປົ້າໝາຍ; ເອົາໃຈໃສ່ຈັດຕັ້ງການໂຄສະນາເຜີຍແຜ່ວິທີການປ້ອງກັນພະຍາດໂຄວິດ-19 ໃຫ້ກວ້າງຂວາງ, ຜ່ານສື່ປະເພດຕ່າງໆທີ່ປະຊາຊົນເຂົ້າເຖິງໄດ້ງ່າຍ, ການໃຫ້ຄຳແນະນຳແກ່ພໍ່ແມ່ປະຊາຊົນກ່ຽວກັບຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ ໃນກໍລະນີສົງໄສວ່າຕົນເອງຢູ່ໃນເປົ້າໝາຍການຕິດເຊື້ອ ແລະ ອື່ນໆ; ເພີ່ມທະວີຄວາມເອົາໃຈໃສ່ການປ້ອງກັນ ການລະບາດຂອງພະຍາດໂຄວິດ-19 ຢູ່ໂຮງຮຽນຕ່າງໆ ເຊິ່ງເປັນລູກຫລານຂອງພວກເຮົາ ໂດຍສະເພາະໂຮງຮຽນທີ່ຢູ່ເຂດຫ່າງໄກສອກຫລີກ ໃຫ້ມີຄວາມຮັບປະກັນ ດ້ວຍການສະໜອງອຸປະກອນປ້ອງກັນທີ່ຈຳເປັນ ເພື່ອບໍ່ໃຫ້ລູກຫລານຕົກຢູ່ໃນຄວາມສ່ຽງ; ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ກໍເປັນວິທີການໜຶ່ງໃນການຟື້ນຟູເສດຖະກິດຂອງປະເທດ ໃຫ້ຄືນສູ່ສະພາບປົກກະຕິ ພາຍຫລັງສະພາບການລະບາດຂອງພະຍາດໂຄວິດ-19 ໄດ້ເບົາບາງ ແລະ ຫລຸດລົງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ສະເໜີໃຫ້ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ນຳພາຊີ້ນຳພາກສ່ວນກ່ຽວຂ້ອງຂອງແຂວງ ວາງແຜນການທ່ອງທ່ຽວສີຂຽວຂອງແຂວງ; ຄົ້ນຄວ້າ, ຜັນຂະຫຍາຍບັນດານິຕິກຳທີ່ກ່ຽວຂ້ອງ ຂອງລັດຖະບານ ໂດຍສະເພາະບັນດາມາດຕະການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຕົນ ມີຄວາມສອດຄ່ອງ ແລະ ໄດ້ຮັບຜົນສຳເລັດ.

ສຳລັບວຽກງານການພົວພັນຮ່ວມມືກັບຕ່າງປະເທດ ທ່ານໄດ້ສະເໜີໃຫ້ຄະນະພັກ, ຄະນະນຳຂອງແຂວງ ເອົາໃຈໃສ່ພົວພັນຮ່ວມມື, ເພີ່ມທະວີການຮ່ວມມືດ້ານການຄ້າ-ການລົງທຶນ ກັບບັນດາປະເທດເພື່ອນມິດຍຸດທະສາດ, ເພື່ອນມິດ ແລະ ບັນດາປະເທດບ້ານໃກ້ຄຽງ ໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຕົນ, ນຳເອົາຜົນປະໂຫຍດ ມາສູ່ປະຊາຊົນຢ່າງແທ້ຈິງ. ພິເສດປີນີ້, ສະເໜີໃຫ້ທາງແຂວງເອົາໃຈໃສ່ສ້າງກິດຈະກຳສຳຄັນຕ່າງໆ ໃນປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ເພື່ອພ້ອມກັນສະເຫລີມສະຫລອງສອງວັນສຳຄັນ ໃນການພົວພັນສອງປະເທດ: ວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 45 ປີ ເຊິ່ງເປັນການສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

## ເບີໂທສຸກເສີນ

**❑ ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າ ມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

# ປະກາດການແຕ່ງຕັ້ງນາຍຕຳຫລວດ ປະຈຳການຢູ່ ສພຂ ຜົ້ງສາລີ



(ສພຊ) ຕອນເຊົ້າວັນທີ 19 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດພິທີປະກາດການແຕ່ງຕັ້ງນາຍຕຳຫລວດ ໄປປະຈຳການຢູ່ ສພຂ ຜົ້ງສາລີ ໂດຍການເປັນປະທານຂອງທ່ານ ຫຸມເພັງ ຈອມວິສານ ຮອງປະທານຄະນະປະຈຳ ສພຂ; ມີຮອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ຮອງຫົວໜ້າຫ້ອງການ ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະທານ-ຮອງປະທານຄະນະກຳມະການຂອງສະພາປະຊາຊົນແຂວງ, ຮອງເລຂາທິການສະພາປະຊາຊົນແຂວງ, ຫົວໜ້າຂະແໜງຈັດຕັ້ງ-ກວດກາ ແລະ ພະນັກງານ-ວິຊາການຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງຮອງຫົວໜ້າຫ້ອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂຶ້ນຜ່ານຂໍ້ຕົກລົງຂອງປະທານ ຄຍປປ ວ່າດ້ວຍແຕ່ງຕັ້ງນາຍຕຳຫລວດ ໄປປະຈຳການຢູ່ ຄຍປປ ສະພາປະຊົນແຂວງ ສະບັບເລກທີ 53/ຄນ, ປຊ-ປສ, ລົງວັນທີ 25 ເມສາ 2022; ທ່ານ ນາງ ພິມພາ ມະຫະວົງທັດ ຫົວໜ້າຂະແໜງຈັດຕັ້ງ-ກວດກາ ຂຶ້ນຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍການບັນຈຸ, ສັບຊ້ອນນາຍຕຳຫລວດ ເຂົ້າໃນຂະແໜງການຂອງສະພາປະຊາຊົນແຂວງ ສະບັບເລກທີ 236/ຄປຈຂ, ລົງວັນທີ 16 ພຶດສະພາ 2022 "ເຫັນດີບັນຈຸ, ສັບຊ້ອນ ທ່ານ ພັຕ. ຄຳອ່ອນ ໄຊວິດາວ ຫົວໜ້າພະແນກຄວບຄຸມຢາເສບຕິດ ຈາກກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເຂົ້າໃນຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຂະແໜງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ) ສະພາປະຊາຊົນແຂວງ" ແລະ ຮັບຟັງຕາງໜ້າຈາກ ຄຍປປ ຂຶ້ນຜ່ານຂໍ້ຕົກລົງວ່າດ້ວຍການແບ່ງໜ້າທີ່ຄວາມຮັບຜິດຊອບ ໃຫ້ນາຍຕຳຫລວດ ທີ່ມາສັງກັດຢູ່ ຄຍປປ ສະພາປະຊາຊົນແຂວງ ສະບັບເລກທີ 76/ຄຍປປ, ລົງວັນທີ 18 ພຶດສະພາ 2022.

ໃນພິທີ, ທ່ານ ຫຸມເພັງ ຈອມວິສານ ໄດ້ໂອ້ລົມຕໍ່ພິທີດັ່ງກ່າວ ເຊິ່ງທ່ານກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະຮັບຜິດຊອບກະກຽມພິທີໃນຄັ້ງນີ້ ແລະ ກ່າວສະແດງຄວາມຍິນດີຕໍ່ທ່ານ ພັຕ. ຄຳອ່ອນ ໄຊວິດາວ ທີ່ໄດ້ຮັບການແຕ່ງຕັ້ງມາປະຈຳການຢູ່ສະພາປະຊາຊົນແຂວງ; ພ້ອມກັນນັ້ນ, ທ່ານຍັງໄດ້ເນັ້ນບາງບັນຫາ ເປັນຕົ້ນແມ່ນ ເພີ່ມທະວີການກຳແໜ້ນແນວທາງ, ນະໂຍບາຍຂອງພັກ-ລັດ, ມະຕິ, ຄຳສັ່ງ, ນິຕິກຳຕ່າງໆ ຂອງຂັ້ນເທິງ ລວມທັງພາລະບົດບາດສິດໜ້າທີ່ຂອງສະພາປະຊາຊົນແຂວງ, ຄາດໝາຍສູ້ຊົນທີ່ຂັ້ນເທິງ ກໍຄືຂັ້ນຂອງຕົນວາງອອກ; ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກຂອງແຕ່ລະຂັ້ນຕາມຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບສຽງໜ້ອຍຂຶ້ນກັບສຽງສ່ວນຫລາຍ, ບຸກຄົນຂຶ້ນກັບການຈັດຕັ້ງ; ເປັນແບບຢ່າງທີ່ດີ, ເປັນຕົ້ນແມ່ນການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍ, ການວາງທັດສະນະມະຫາຊົນ, ຄຸນສົມບັດ, ສິນທຳປະຕິວັດ, ການເຄື່ອນໄຫວພົວພັນສັງຄົມ, ການເຝິກຝົນຫລໍ່ຫລອມຕົນເອງ ແລະ ອື່ນໆ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ຊຸກຍູ້ການປະຕິບັດກົດໝາຍ ຂອງອົງການໄອຍະການປະຊາຊົນແຂວງອຸດົມໄຊ

(ສພຊ) ວັນສຸກທີ 13 ພຶດສະພາ 2022 ຢູ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງອຸດົມໄຊ, ທ່ານ ທອງຄານ ວັດສະດາກອນ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງອຸດົມໄຊ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ອົງການໄອຍະການປະຊາຊົນແຂວງ, ມີທ່ານ ບຸນທ່ຽງ ວິໄລວົງ ຫົວໜ້າອົງການໄອຍະການປະຊາຊົນແຂວງ ແລະ ພະນັກງານຂະແໜງກ່ຽວຂ້ອງເຂົ້າຮ່ວມ.



ການເຄື່ອນໄຫວຄັ້ງນີ້ແມ່ນປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງການທາບທາມຮ່າງກົດໝາຍ 5 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ເພື່ອຕິດຕາມການຈັດຕັ້ງຜັນຂະຫຍາຍມະຕິສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດແຕ່ປີ 2021-2023.

ທ່ານ ບຸນທ່ຽງ ວິໄລວົງ ໄດ້ລາຍງານໃຫ້ຮູ້ວ່າ: ພາຍຫລັງໄດ້ຮັບເອກະສານທີ່ທາງຂັ້ນເທິງສົ່ງໃຫ້ອົງການໄອຍະການປະຊາຊົນແຂວງອຸດົມໄຊ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມໃຫ້ພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບການປະຕິບັດໜ້າທີ່ວຽກງານ, ກ່ຽວກັບການດຳເນີນຄະດີກ່ຽວກັບບັນຫາຢາເສບຕິດເປັນຕົ້ນແມ່ນຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 02/ກມສພ, ລົງວັນທີ 26 ກໍລະກົດ 2021 ວ່າດ້ວຍການເພີ່ມທະວີການນຳພາຊີ້ນຳຂອງຄະນະພັກແຕ່ລະຂັ້ນຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ, ຄຳສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 020/ອອປສ, ລົງວັນທີ 1 ທັນວາ 2021 ວ່າດ້ວຍການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດແຕ່ປີ 2021-2023 ເຂົ້າສູ່ວຽກງານໄອຍະການ ແລະ ເອກະສານສຳຄັນຕ່າງໆອີກຈຳນວນໜຶ່ງ.

ໂອກາດດັ່ງກ່າວ, ຄະນະໄດ້ປະກອບຄຳຄິດຄຳເຫັນ ແລະ ໄດ້ຖາມເຈາະຈີ້ມຕໍ່ບາງບັນຫາທີ່ເຫັນວ່າການຈັດຕັ້ງປະຕິບັດວຽກງານຜ່ານມາພົບຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ເນື່ອງຈາກສາເຫດອັນໃດ, ຈະຊ່ວຍກັນຊຸກຍູ້ພາກສ່ວນກ່ຽວຂ້ອງແກ້ໄຂ ແລະ ມີທິດທາງແຜນການແກ້ໄຂແນວໃດໃນຕໍ່ໜ້າ ເພື່ອເຮັດໃຫ້ວຽກງານດັ່ງກ່າວດີຂຶ້ນກວ່າເກົ່າ.

(ແສງພອນ ອິນນະລົງ)

# ສະຫະພັນແມ່ຍິງຮາກຖານ ຮັບຟັງການເຜີຍແຜ່ເອກະສານ

(ສພຊ) ໃນຕອນເຊົ້າວັນທີ 18 ພຶດສະພາ 2022 ສະຫະພັນແມ່ຍິງແຂວງສະຫວັນນະເຂດ ໄດ້ເຄື່ອນໄຫວເຜີຍແຜ່ເອກະສານ ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໂດຍການເຜີຍແຜ່ເອກະສານຂອງສະຫາຍນາງ ແກ້ວພອນ ເກດຕະວົງ ຮອງປະທານສະຫະພັນແມ່ຍິງແຂວງ; ເຂົ້າຮ່ວມຮັບຟັງໃນຄັ້ງນີ້ມີ, ສະຫາຍ ນາງ ພູທອນ ແກ້ວພູວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງທັງເປັນຜູ້ຊີ້ນຳວຽກງານອົງການຈັດມະຫາຊົນ, ມີບັນດາສະຫາຍປະທານ-ຮອງປະທານສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.



ໃນພິທີ, ສະຫາຍ ນາງ ແກ້ວພອນ ເກດຕະວົງ ໄດ້ນຳເອົາເນື້ອໃນ 4 ເອກະສານມາເຜີຍແຜ່ ຄື: ມະຕິກອງປະຊຸມວິສາມັນຄົບຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ສະໄໝທີ VIII ຄັ້ງວັນທີ 11 ມັງກອນ 2022, ມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງແຂວງສະຫວັນະເຂດ ຄັ້ງທີ X, ມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII ຄັ້ງວັນທີ 19 ພະຈິກ 2021 ທີ່ຫໍປະຊຸມແຫ່ງຊາດ ນະຄອນຫລວງວຽງຈັນ ແລະ ບົດໂອ້ລົມຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ຕໍ່ກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII ຄັ້ງວັນທີ 19 ພະຈິກ 2021 ທີ່ຫໍປະຊຸມແຫ່ງຊາດ. ພ້ອມດຽວກັນນີ້, ຍັງຮຽກຮ້ອງໃຫ້ສະມາຊິກເອື້ອຍນ້ອງແມ່ຍິງໃຫ້ສ້າງຕົນເອງໃຫ້ມີຄວາມເຂັ້ມແຂງ, ພ້ອມກັນປູກຈິດສຳນຶກ, ອົບຮົມບົ່ມສອນລູກຫລານ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາຮີດຄອງປະເພນີ, ພ້ອມກັນຊີ້ນຳໆພາວຽກງານພາຍໃນຂົງເຂດທີ່ຕົນຮັບຜິດຊອບໃຫ້ປະສົບຜົນສຳເລັດຕາມຄາດໝາຍທີ່ວາງໄວ.

(ນາງ ຄອນສະຫວັນ ເມກສະຫວັນ)



# ສະພາປະຊາຊົນແຂວງບໍ່ແກ້ວ ພົບປະກັບອົງການກວດສອບປະຈຳພາກເໜືອ




(ສພຊ) ໃນວັນທີ 16 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງບໍ່ແກ້ວ ໄດ້ເປີດກອງປະຊຸມພົບປະລະຫວ່າງສະພາປະຊາຊົນແຂວງບໍ່ແກ້ວ ກັບອົງການກວດສອບປະຈຳພາກເໜືອ ນຳໂດຍທ່ານ ຈອມສີ ລັດຕະນະປັນ ປະທານສະພາປະຊາຊົນແຂວງ ແລະ ທ່ານ ສາລະວັນ ອິນທະວົງ ຮອງປະທານອົງການກວດສອບປະຈຳພາກເໜືອ ພ້ອມດ້ວຍຄະນະທີມງານ ທີ່ມາຈາກອົງການກວດສອບ ແລະ ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງກໍໄດ້ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ແມ່ນເພື່ອພົບປະ ແລະ ເຮັດວຽກຮ່ວມກັນລະຫວ່າງສະພາປະຊາຊົນແຂວງບໍ່ແກ້ວ ກັບອົງການກວດສອບປະຈຳພາກເໜືອ ກ່ອນການດຳເນີນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ຂອງແຂວງບໍ່ແກ້ວ ແລະ ເພື່ອເປັນການແລກປ່ຽນຂໍ້ມູນ, ຂ່າວສານ ທັງແລກປ່ຽນຄຳຄິດຄຳເຫັນຕໍ່ມາດຕະການແກ້ໄຂຜົນການກວດສອບຕາມມະຕິສະພາປະຊາຊົນແຂວງ, ຄຳແນະນຳຂອງຄະນະກວດສອບ ແລະ ເປົ້າໝາຍຖືກກວດສອບ.

(ນາງ ຂັນຖະໜອມ ແກ້ວມະນີ)

# ສພຂ ອຸດົມໄຊ ທາບທາມຮ່າງກົດໝາຍ 3 ສະບັບ ໃນຂົງເຂດເສດຖະກິດ




(ສພຊ) ວັນທີ 17 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ, ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 3 ສະບັບໃນຂົງເຂດເສດຖະກິດ ຄື: ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ຮ່າງກົດໝາຍວ່າດ້ວຍເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ, ມີຮອງປະທານ ສພຂ, ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ອຸດົມໄຊ, ຫົວໜ້າ-ຮອງຫົວໜ້າພະແນກ ພ້ອມດ້ວຍຄະນະ, ມີຮອງຫົວໜ້າສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ, ສະມາຊິກສະພາປະຊາຊົນແຂວງ, ຄະນະຮັບຜິດຊອບ, ແຂກເຊີນ ແລະ ວິຊາການຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ຄະນະຮັບຜິດຊອບໄດ້ຜ່ານບົດລາຍງານການຈັດຕັ້ງປະຕິບັດການທາບທາມໂດຍຫຍໍ້ ເພື່ອໃຫ້ບັນດາຜູ້ແທນທີ່ເຂົ້າຮ່ວມ ພ້ອມກັນຄົ້ນຄ້ວາປະກອບຄຳຄິດຄຳເຫັນກ່ຽວກັບການລາຍງານ ແລະ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ເປັນຕົ້ນແມ່ນຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ເຊິ່ງປະກອບດ້ວຍມາດຕາ 36 ເປົ້າໝາຍການນຳໃຊ້ແຫລ່ງນ້ຳ, ມາດຕາ 36/1 ການອວ່າຍແລວນ້ຳ ແລະ ມາດຕາ 36/2 ອົງການລັດທີ່ມີສິດຕົກລົງການອວ່າຍແລວນ້ຳ, ມາດຕາ 67 ຂໍ້ຫ້າມທົ່ວໄປຕໍ່ການກຳນົດເນື້ອໃນຂອງ 4 ມາດຕານີ້ ໂດຍສະເພາະມາດຕາ 36/2 ອົງການລັດທີ່ມີສິດຕົກລົງການອວ່າຍແລວນ້ຳ ທີ່ກຳນົດກ່ຽວກັບຂອບເຂດສິດ ແລະ ໜ້າທີ່ຂອງອົງການລັດໃນການຕົກລົງອວ່າຍແລວນ້ຳເຊິ່ງປະກອບດ້ວຍ 3 ລະດັບ ຄື: ສະພາແຫ່ງຊາດ, ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ.

ການປັບປຸງບາງມາດຕາຂອງກົດໝາຍສະບັບນີ້ ກໍເພື່ອເຮັດໃຫ້ວຽກງານອວ່າຍແລວນ້ຳມີຄວາມຖືກຕ້ອງ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ ຈຶ່ງໄດ້ປັບປຸງ 2 ມາດຕາ ແລະ ເພີ່ມເຂົ້າໃໝ່ 2 ມາດຕາ.

ນອກຈາກນັ້ນ, ຄະນະຮັບຜິດຊອບໄດ້ສືບຕໍ່ສະເໜີຮ່າງກົດໝາຍວ່າດ້ວຍເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ; ປະທານກອງປະຊຸມໄດ້ມີຄຳເຫັນ ແລະ ໄດ້ຊີ້ນຳໃນການປະກອບຄຳຄິດຄຳເຫັນຂອງບັນດາທ່ານຜູ້ແທນກອງປະຊຸມ ແລະ ໄດ້ສົນທະນາ, ປະກອບຄຳຄິດຄຳເຫັນຕາມຄຳຖາມເຈາະຈີ້ມຂອງປະທານ ແບບກົງໄປກົງມາ ແລະ ເລິກເຊິ່ງ, ກວ້າງຂວາງ ແລະ ໄດ້ເນື້ອໃນຈະແຈ້ງ ເພື່ອເປັນຂໍ້ມູນໃຫ້ສະມາຊິກສະພາແຫ່ງຊາດຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ອຸດົມໄຊ ປະກອບຄຳຄິດຄຳເຫັນໃສ່ບັນດາຮ່າງກົດໝາຍຕ່າງໆ ທີ່ຈະນຳເຂົ້າຜ່ານໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາ.

(ແສງພອນ ອິນນະລົງ)

# ສສຂ ປະຈຳເມືອງເງິນ ເຂົ້າຮ່ວມ ທາບທາມຮ່າງກົດໝາຍ 5 ສະບັບ




(ສພຊ) ວັນທີ 12 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມທາງໄກຫ້ອງວ່າການເມືອງເມືອງເງິນ ແຂວງໄຊຍະບູລີ, ທ່ານ ນາງ ສີຈິມ ບຸນມານະທຳ ຮອງເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເມືອງເງິນ ພ້ອມດ້ວຍຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມກອງປະຊຸມທາບທາມຮ່າງກົດໝາຍ 5 ສະບັບ (ແບບລະບົບທາງໄກ) ເຊິ່ງຈັດຂຶ້ນໂດຍສະພາປະຊາຊົນແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງ.

ວາລະດຳເນີນກອງປະຊຸມ, ສະມາຊິກສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກໍ່ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ 5 ຮ່າງກົດໝາຍຄື: ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ; ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.

ທັງໝົດນີ້, ກໍເພື່ອປັບປຸງບາງມາດຕາຂອງກົດໝາຍ, ເຮັດໃຫ້ກົດໝາຍທັງ 5 ສະບັບ ມີເນື້ອໃນ ຮັດກຸມຄົບຖ້ວນ ເພື່ອຜົນປະໂຫຍດລວມສູງສຸດຂອງຊາດ, ຂອງປະຊາຊົນຮັບປະກັນຄວາມຍຸຕິທຳ ແລະ ສົມເຫດສົມຜົນ ສາມາດຈັດຕັ້ງປະຕິບັດໄດ້.

(ອິນແປງ ແຫວນຄຳ)

# ສພຂ ໄຊສົມບູນ ກຽມຄວາມພ້ອມ ດຳເນີນ 2 ກອງປະຊຸມ



(ສພຊ) ໃນຕອນເຊົ້າຂອງວັນທີ 17 ພຶດສະພາ 2022 ຄະນະເລຂາທິການສະພາປະຊາຊົນແຂວງໄຊສົມບູນ ໄດ້ເປີດກອງປະຊຸມທີ່ຫ້ອງປະຊຸມຂອງຕົນ ພາຍໃຕ້ການເປັນປະທານຂອງ ທ່ານ ບີ ເຣີ່ ຮອງເລຂາທິການສະພາປະຊາຊົນແຂວງ; ມີຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫລອດຮອດພະນັກງານ, ວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອຮັບປະກັນໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ທີ່ຕິດພັນກັບການຈັດຕັ້ງປະຕິບັດໃນຂົງເຂດເສດຖະກິດ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດຍຸຕິທຳ ທີ່ຈະມາຮອດໃນໄວໆນີ້.

ທ່ານ ບີ ເຣີ່ ໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ກໍເພື່ອເປັນການມອບໜ້າທີ່ຄວາມຮັບຜິດຊອບໃຫ້ແກ່ພະນັກງານພາຍໃນສະພາປະຊາຊົນແຂວງທີ່ນອນຢູ່ໃນແຕ່ລະໜ້າວຽກງານ ໄດ້ກຽມຄວາມພ້ອມ, ຮັດແໜ້ນຄວາມສາມັກຄີ ແລະ ຈິ່ງພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກະກຽມ ແລະ ດຳເນີນກອງປະຊຸມຄົ້ນຄວ້າ ແລະ ປະກອບຄຳຄິດເຫັນໃສ່ຮ່າງກົດໝາຍ ຈຳນວນ 9 ສະບັບ ຢູ່ແຂວງໄຊສົມບູນ ໃຫ້ລ້ອນຕາມສິດ ແລະ ໜ້າທີ່ຂອງຕົນ. ພ້ອມລົງເລິກແຕ່ລະອະນຸກຳມະການ, ກຳນົດດ້ານຮູບການ, ວິທີການດຳເນີນກອງປະຊຸມ, ກຳນົດເນື້ອໃນ ແລະ ລາຍງານການເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານໃຫ້ຂັ້ນເທິງເປັນປົກກະຕິແຕ່ລະໄລຍະ; ການເຄື່ອນໄຫວວຽກງານຂອງແຕ່ລະອະນຸກຳມະການ ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມບັນລຸຕາມຈຸດປະສົງ, ລະດັບຄາດໝາຍທີ່ວາງໄວ້ ທັງມີຄວາມຮັບຄວາມຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຄາດຕົກບົກຜ່ອງ ຕໍ່ຂັ້ນເທິງໃນການກະກຽມ ແລະ ດຳເນີນກອງປະຊຸມໃນຄັ້ງນີ້; ຮຽກໂຮມປະຊຸມບັນດາອະນຸກຳມະການຕ່າງໆ ເພື່ອກວດກາຕິດຕາມວຽກງານ ແລະ ລາຍງານໃນການກະກຽມດ້ານຕ່າງໆ ພາຍຫລັງສຳເລັດກອງປະຊຸມ ສະຫລຸບຖອດຖອນບົດຮຽນ ໃຫ້ທັນເວລາ ແລະ ລາຍງານໃຫ້ຂັ້ນເທິງຮັບຊາບ; ຂໍທິດຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ການນຳຂັ້ນແຂວງ, ພົວພັນປະສານສົມທົບກັບບັນດາພະແນກການ, ອົງການ, ກົມກອງຕ່າງໆ ທີ່ກ່ຽວຂ້ອງເພື່ອໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ຕໍ່ການຈັດຕັ້ງປະຕິບັດ ໃນການເຄື່ອນໄຫວວຽກງານ ທີ່ຈະໄດ້ດຳເນີນ 2 ກອງປະຊຸມດັ່ງກ່າວ ມາຂ້າງເທິງນີ້ ໃຫ້ມີສະຖຽນລະພາບທີ່ດີ.

(ນາງ ອຳໄພພອນ ແກ້ວວິໄລ)

# ສພຂ ສາລະວັນ ທາບທາມກົດໝາຍ 2 ສະບັບ



(ສພຊ) ໂດຍປະຕິບັດຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ, ໃນວັນທີ 17 ພຶດສະພາ 2022 ທີ່ຫ້ອງປະຊຸມຮັບຮອງສະໂມສອນແຂວງ, ສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມທາບທາມກົດໝາຍ ຈຳນວນ 2 ສະບັບ ພາຍໃຕ້ການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ (ສພຂ), ມີທ່ານ ຮອງປະທານ ສພຂ ພ້ອມດ້ວຍຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ ສພຂ; ມີຕາງໜ້າຈາກສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ກອງບັນຊາການທະຫານແຂວງ, ພະແນກຍຸຕິທຳ, ອົງການກວດກາລັດແຂວງ, ພະແນກພາຍໃນ, ພະນັກງານກ່ຽວຂ້ອງ ສພຂ ເຂົ້າຮ່ວມ.

ກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງບາງມາດຕາ); ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດເສິກ ແລະ ວັດຖຸລະເບີດ ເຊິ່ງຜູ້ເຂົ້າຮ່ວມກອງປະຊຸມໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດ, ຄຳເຫັນຢ່າງກົງໄປກົງມາດ້ວຍເຫດຜົນ ແລະ ຍົກເອົາປະສົບການ, ບົດຮຽນ ໃນການປະຕິບັດວຽກງານຕົວຈິງມາແລກປ່ຽນຄຳຄິດ, ຄຳເຫັນ, ນຳກັນຕາມເນື້ອໃນການເຈາະຈີ້ມຂອງບາງມາດຕາ ແລະ ມາດຕາອື່ນໆທີ່ມີຄວາມສົນໃຈ; ທັງໝົດນີ້ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສພຂ ຈະໄດ້ສັງລວມຄວາມຄິດເຫັນຂອງພາກສ່ວນກ່ຽວຂ້ອງເພື່ອເຮັດໃຫ້ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ສາມາດນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 3 ສະພາແຫ່ງຊາດ ໃນຕໍ່ໜ້າ; ແນໃສ່ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳຫລາຍຂຶ້ນກວ່າເກົ່າ ເຮັດໃຫ້ການຄຸ້ມຄອງລັດຄຸ້ມຄອງສັງຄົມມີຄວາມຍຸຕິທຳ ແລະ ໂປ່ງໃສ.

(ນາງ ຄັດສອນ ຮຸ່ງສະຫວ່າງ)



## ສຸກສະບາຍຫາຍໂຣຄາ

# ໄພງຽບຈາກແສງ

# ໂດຍ: ສາວແອ່ນ



ແສງສີຟ້າ ແມ່ນແສງທີ່ມີພະລັງງານສູງ ເຊິ່ງປະສົມຢູ່ໃນແສງສີຂາວທີ່ມະນຸດສັງເກດເຫັນໄດ້ ແລະ ຢູ່ອ້ອມຮອບຕົວເຮົາ ມັນສາມາດສົ່ງຜົນຕໍ່ຜິວໜັງຂອງເຮົາໄດ້ຢ່າງບໍ່ຄາດຄິດ ເພາະເປັນແສງທີ່ສາມາດພົບໄດ້ໃນແສງແດດ, ດອກໄຟຟູອໍເຣນ ເຊັ່ນ: ຈາກໜ້າຈໍໂທລະສັບ, ຄອມພິວເຕີ, ໂທລະພາບ ແລະ ຈໍແອວອີດີ; ສະນັ້ນ, ຖ້າໃຜຄິດວ່ານັ່ງຢູ່ໜ້າຈໍຄອມພິວເຕີ ແລະ ໂທລະສັບ ຢູ່ພາຍໃນເຮືອນ ຫລື ໃນຫ້ອງການ ຫລື ໃຊ້ຄີມກັນແດດເປັນປະຈຳ ແລ້ວຈະປອດໄພຈາກແສງສີຟ້າ ທ່ານຄວນຈະຄິດທົບທວນໃໝ່ອີກຄັ້ງ.

ຜົນກະທົບແສງສີຟ້າມີຄື:

- ເຮັດໃຫ້ເກີດສານອະນຸມູນອິດສະຫລະ ທີ່ມີສ່ວນຊ່ວຍກະຕຸ້ນການຜະລິດເອັນຊາຍ ທີ່ທຳລາຍຄໍລາເຈນ (Collagen) ແລະ ອີລາດສຕິນ (Elastin) ໃນຜິວໜັງ, ເຮັດໃຫ້ເຊວຜິວໜັງເສື່ອມສະພາບໄວກ່ວາປົກກະຕິ ພາໃຫ້ເກີດຮອຍຫ່ຽວງ່າຍ, ຜິວຂາດຄວາມຊຸ່ມຊື່ນ ແລະ ແກ່ກວ່າໄວ;

- ໃນຕອນກາງຄືນ ແສງສີຟ້າຈະລົບກວນການເຮັດວຽກຂອງຮ່າງກາຍ ເຮັດໃຫ້ຜິວໜັງຜິດປົກກະຕິຈາກທີ່ຄວນຈະເປັນ ແລະ ສົ່ງຜົນກະທົບຕໍ່ຂະບວນການຟື້ນຟູຕາມທຳມະຊາດຂອງຜິວໜັງ ເຮັດໃຫ້ຜິວໜັງແກ່ກວ່າໄວ ເພາະແສງສີຟ້າ ເປັນຕົວການເຮັດໃຫ້ຜິດໜັງເກີດຄວາມຮັບຮູ້ຜິດວ່າເປັນເວລາກາງເວັນ;

- ກະຕຸ້ນການເກີດຝ້າ, ກະ, ຝ້າແດດຝັງເລິກ, ຈຸດດ່າງດຳ, ຜິວໝອງຄ້ຳ ເຊັ່ນດຽວກັນກັບແສງຢູວີເອ ແລະ ຢູວີບີ;

- ແສງສີຟ້າ ສາມາດເຮັດໃຫ້ເກີດການອັກເສບຂອງຜິວໜັງ ແລະ ເຮັດໃຫ້ເກີດຈຸດດ່າງດຳ;

- ເຮັດໃຫ້ເກາະປ້ອງກັນຜິວອ່ອນແອລົງ, ສີຜິວບໍ່ສະໝ່ຳສະເໝີ ຈາກການສຶກສາຂອງນັກຄົ້ນຄວ້າຊາວຍີ່ປຸ່ນ ໃນປີ 2008 ໂດຍເອົາໜູທົດລອງ ພົບວ່າແສງສີຟ້າແຊກແຊງການຟື້ນຟູເກາະປ້ອງກັນຜິວໜັງ;

- ລົບກວນການເຮັດວຽກຂອງຮໍໂມນທີ່ຊ່ວຍໃຫ້ນອນຫລັບ ເຮັດໃຫ້ນອນບໍ່ຫລັບ ແລະ ສົ່ງຜົນເສຍຫາຍໂດຍທາງອ້ອມ ເຮັດໃຫ້ຜິວໜັງຂອງເຮົາຊຸດໂຊມ.

ນອກຈາກແສງສີຟ້າ ຈະເປັນອັນຕະລາຍຕໍ່ຜິວໜັງແລ້ວ ຍັງເປັນອັນຕະລາຍຕໍ່ດວງຕາ ເພາະມັນເປັນຕົວການສຳຄັນ ທີ່ພາໃຫ້ເກີດພາວະຕາເມື່ອຍ-ອ່ອນເພຍ, ຕາແຫ້ງ, ຕາລາຍ, ຕາມົວ ແລະ ນ້ຳຕາໄຫລ; ນອກຈາກນີ້, ການພົບເຈີກັບແສງສີຟ້າເປັນເວລາດົນໆ ຍັງເຮັດໃຫ້ຈໍປະສາດຕາເສື່ອມໂຊມລົງເທື່ອລະໜ້ອຍ ເນື່ອງຈາກຄື້ນແສງພະລັງງານສູງ ຈະຊັກນຳໃຫ້ການສ້າງອະນຸມູນອິດສະຫລະເຮັດໃຫ້ເຊວຄ່ອຍໆເສື່ອມລົງ ເຊິ່ງຜູ້ຍິງຈະມັກເປັນພະຍາດນີ້ຫລາຍກວ່າຜູ້ຊາຍ.

ວິທີປ້ອງກັນ

- ຫລຸດຜ່ອນການຫລິ້ນໂທລະສັບມືຖື ຫລື ແທັບເລັດໃຫ້ໜ້ອຍລົງ ໂດຍສະເພາະໃນຕອນກາງຄືນ.

- ປັບແສງໜ້າຈໍຄອມພິວເຕີ ຫລື ໂທລະສັບມືຖື ໃຫ້ເບົາບາງລົງ ແລະ ບໍ່ແຈ້ງຈົນເກີນໄປ;

- ຕິດຟິມປ້ອງກັນແສງສີຟ້າໃສ່ໜ້າຈໍຄອມພິວເຕີ, ໂທລະສັບມືຖື ແລະ ແທັບເລັດ;

- ຊອກຫາກິດຈະກຳເຮັດໃນເວລາຫວ່າງ ແທນທີ່ຈະຢູ່ກັບໜ້າຈໍ ເຊັ່ນ: ອ່ານປຶ້ມ, ຫລິ້ນກິລາ...;

- ໃຊ້ຜະລິດຕະພັນບຳລຸງຜິວ ຫລື ຄວາມຊຸ່ມຊື່ນທີ່ມີສານລູທີນ, ເບຕາເຄໂລທີນ, ວິຕາມິນຊີ ຫລື ສານຕ້ານອະນຸມູນອິດສະລະ (Antioxidant) ເພື່ອຊ່ວຍປົກປ້ອງຜິວ ແລະ ກະຕຸ້ນການຜະລິດຄໍລາເຈນໃຫ້ແກ່ຜິວ.

- ໃຊ້ຄີມກັນແດດ ທີ່ມີຄຸນສົມບັດປ້ອງກັນຢູວີ ແລະ ແສງສີຟ້າ.

## ສາລາກະວີ

# ຊ່ວຍກັນປູກປ່າ

# ສຸກສະຫວັນ ພົມມະວົງ

✻ ຮຽນນີ້ຈຳຈື່ໄດ້
ສາວຄູສອນ
ກຽມຄວາມພ້ອມ
ອອກແຮງງານຮ່ວມຫ້ອງ

ຄາວກ່ອນຕອນຮຽນ
ສັ່ງມາຂຽນໄວ້
ວານຫາມວນໝູ່
ກຽມພ້ອມຮັບມື

✻ ຄູບອກວັນເດັກນ້ອຍ
ຢາຍຄືນຊຸມ
ຕອນນີ້ຄຳນຶງພໍ້
ມະໂນພາບຕ່ອຍຕ້ອງ

ກຽມປູກພຶກສາ
ປູກກັນຄືນຕົ້ນ
ຄຳຄູສອນກ່າວ
ເຫັນໄດ້ຄ່າຄຸນ

✻ ພໍແຕ່ມາຮອດບ້ານ
ຍຸງຍາງແດງ
ສີຂຽວເຂັ້ມ
ຫາກເມື່ອມັນໃຫຍ່ຂຶ້ນ

ຫາໝໍ່ແນວພັນ
ປູກຝັງດິນໄວ້
ເຕັມມືພຽນປູກ
ຢືນຕົ້ນຮົ່ມເຢັນ

✻ ລົງມືປຸນປູກເບ້ຍ
ແຍງລຳໃບ
ເປັນແນວລ້ອມ
ແປງປ່ຽນໂລກເຮັ່ງຮ້ອນ

ວັນຜ່ານຫລາຍປີ
ໃຫຍ່ກາຍຫົວພົ້ນ
ປັບຈູນອາກາດ
ຄືນໃຫ້ຊຸ່ມເຢັນ

✻ ໃຫຍ່ຂຶ້ນຮຽນຈຶ່ງຮູ້
ແຕ່ວ່າຫລາຍຄົນຕັດ
ຈຶ່ງໄດ້ມາຂໍຮ້ອງ
ຊວນປູກຢຸດໂຄ່ນໄມ້

ຫາກປູກຢູ່ຄົນດຽວ
ແບ່ງປັນນຳໃຊ້
ຫາຄົນໂຮມຮ່ວມ
ຮັກສາໄວ້ຊ່ວຍກັນ ແດ່ທ້ອນ!

## ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະ



## ທັກທາຍ ລະບາຍ

# ສາວຈິ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

✻ *ໃນໄລຍະນີ້ ເຫັນມີ**ຫລາຍພາກສ່ວນ** ຖະແຫລງຂ່າວກ່າວເຖິງການ**ວາງແຜນປູກຕົ້ນໄມ້** ໃນໂອກາດວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ໂດຍເນັ້ນປູກໃຫ້ໄດ້**ຫລາຍໆເຮັກຕາ ຊົມເຊີຍ!** ຄັນວ່າແປງປູກແລ້ວ ຫລິງຫລ່າບົວລະບັດ ກໍດີດາຍ ຢ່າປູກໄລລາປະ ປ່ອຍໄປຕາມເລື້ອງ **ຕອນປູກ**ເຮືອງໆເຫລື້ອມ ຝຸງຊົນເຕັມອັ່ງ ຫລັງໆໄປຢ່າໄດ້ປະປ່ອຍໃຫ້ **ຝຸງຫຍ້າອັ່ງແຫນ** ຊໍໃຫ້ລ້ອມຮົ້ວແໜ້ນ ກັບໝູ່ຝຸງສັດ**ບ່າເບີ!** ຢ່າປ່ອຍມັນມາກັດ ແທ້ນກິນຈົນກ້ຽງ ຢ້ານໄດ້ວຽນອົ້ນກ້ຽວ ປູກຄືນຊຸມເກົ່າ **ນັ້ນບ່າ** ເພາະປີຕໍ່ມາຊິໄດ້ແປງປູກຊ້ຳ ຊຸມເດີມເລື້ອຍຢູ່ບໍ່ເຊົາ **ບໍ່ເປັນດາຍ!***

✻ *ຊົມເຊີຍທັບນັກກິລາລາວ ທີ່ໄດ້ຮັບ **42** ຫລຽນ ໃນ**ຊີເກມຄັ້ງທີ 31** ໂດຍປິດລົງຢ່າງເປັນທາງການ **ໃນວັນທີ 23** ຜ່ານມາ ໃນນັ້ນເຫັນວ່າມີ **2 ຫລຽນຄຳ, 7 ຫລຽນເງິນ ແລະ 33 ຫລຽນທອງ** ຊໍຊື່ນຊົມຍົກຍ້ອງ ໂຮມຮ່ວມດີໃຈ ໄພ່ປະຊາສຸດແສນ ມ່ວນໃຈສະອອນໂອ້ ເປັນສິ່ງໂຄສະນາໃຫ້ ລາວເຮົາໂດດເດັ່ນ ສາກົນເຫັນຮັບຮູ້ ລາວບໍ່ດ້ອຍກວ່າໃຜ **ທ່ານເອີຍ!***

✻ *ທໍ່ວຊໍ່ຂ່າວ **"ນ້ຳມັນແພງຄວນຫາທາງອອກແນວໃດ"** ສາວຈິ້ມອ່ານໜັງສືພິມໄປເຫັນແລ້ວສະດຸດຕາ ເພາະສະຖານະການຕອນນີ້ ໄປແຈໃດກໍໜີບໍ່ພົ້ນການສົນທະນາເລື່ອງລາຄານ້ຳມັນແພງ ຫລາຍເຫດຜົນເພີ່ນເວົ້າ ໃນຊ່າວຫລາຍບັນຫາ ລວມທັງການເຈລະຈາ ແຫລ່ງທີ່ມາໃນການຊື້ ຟັງເຫດຜົນສັງມາຄືໃຈຄ້ອຍ ເປັນຊອຍອອຍຊົງເປັນຫ່ວງ **ເດ ບໍ່!** ຊໍໃຫ້ພົງພີ່ນ້ອງ ປະຢັດພ້ອມພ່ຳກັນ **ທ່ານເອີຍ!***

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ຍ້ອນເຮັດດົບໂພດ**

ທ້າວແປະ ໄປຊື້ກາລະເປົາ ພໍກັບເມືອຮອດເຮືອນປາກໍດ່າມັນບູດ ເລີຍເອົາມາສົ່ງຄືນ

**ທ້າວແປະ:** ກາລະເປົາລຸງບູດ ກິນບໍ່ໄດ້ ຊໍສົ່ງຄືນ

**ຄົນຂາຍ:** ມຶງຢ່າມາດູຖູກກູບັກທ້າວນ້ອຍ ກູເຮັດກາລະເປົານີ້ແຕ່ມຶງບໍ່ທັນເກີດພຸ້ນ

**ທ້າວແປະ:** ກະທັ້ນລະ ຍ້ອນລຸງເຮັດດົບໂພດ ມັນຈຶ່ງບູດ

**ຄົນຂາຍ:** ???



## ຄະຕິເຕືອນໃຈ

# ດອກຂະຍອມ

ໄວປາກເສຍສິນ
ໄວຕີນຕົກຕົ້ນໄມ້

# ສະມາຊິກລັດຖະສະພາ ເລືອກຕັ້ງປະທານາທິບໍດີໂຊມາລີ

**ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ**

ອີງຕາມການລາຍງານຂ່າວ ເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ທ່ານ ຮັສຊັນ ຊີກ ມູຫາມັດ ໄດ້ຮັບການເລືອກຕັ້ງເປັນປະທານາທິບໍດີໂຊມາລີ ຫລັງຈາກການເລືອກຕັ້ງຮອບສຸດທ້າຍ ເປີດໃຫ້ສະເພາະສະມາຊິກລັດຖະສະພາ ຈຳນວນ 327 ທ່ານ ໄດ້ລົງຄະແນນສຽງ ໂດຍຖືເປັນໄຊຊະນະເໜືອ ທ່ານ ມູຫາເມັດ ອັບດຸລລາຮີ ຟາຣມາໂຈ ຜູ້ນຳຄົນປັດຈຸບັນ ທີ່ໄດ້ດຳລົງຕຳແໜ່ງມາຕັ້ງແຕ່ປີ 2017.

ເນື່ອງຈາກບັນຫາຄວາມປອດໄພໃນການຄຸ້ມຄອງການເລືອກຕັ້ງຢ່າງກວ້າງຂວາງ ດັ່ງນັ້ນ, ການລົງຄະແນນສຽງແມ່ນໄດ້ຈຳກັດຢູ່ໃນວົງສະມາຊິກລັດຖະສະພາ 328 ທ່ານ ເຊິ່ງສະມາຊິກທ່ານໜຶ່ງບໍ່ໄດ້ລົງຄະແນນສຽງ ໂດຍຜົນການລົງຄະແນນສຽງປາກົດວ່າ: ທ່ານ ຮັສຊັນ ຊີກ ມູຫາມັດ ໄດ້ຮັບ 214 ສຽງ, ຊະນະທ່ານ ມູຫາເມັດ ອັບດຸລລາຮີ ຟາຣມາໂຈ ທີ່ໄດ້ຄະແນນ 110 ສຽງ.

ການເລືອກຕັ້ງຄັ້ງນີ້ ແມ່ນຮອບທີ 3 ເຊິ່ງເປັນຮອບສຸດທ້າຍ ແມ່ນຊ້າໄປເກືອບ 15 ເດືອນຍ້ອນບັນຫາການປະທະກັນ ແລະ ບັນຫາຄວາມປອດໄພ.

ທ່ານ ຮັສຊັນ ຊີກ ມູຫາມັດ ໄດ້ສາບານຕົວເຂົ້າຮັບຕຳແໜ່ງບໍ່ດົນຫລັງຈາກການປະກາດຜົນການເລືອກຕັ້ງຄັ້ງສຸດທ້າຍ ເຮັດໃຫ້ຜູ້ສະໜັບສະໜູນໃນນະຄອນຫລວງຂອງປະເທດສະແດງຄວາມຊົມເຊີຍ ແລະ ຍິງປືນຂຶ້ນສູ່ທ້ອງຟ້າ ເພື່ອສະຫລອງຜູ້ນຳຄົນໃໝ່ ທີ່ຈະຢູ່ໃນຕຳແໜ່ງເປັນຜູ້ນຳຂອງປະເທດຈາກນີ້ໄປຕື່ມອີກ 4 ປີ.

ຜູ້ນຳຄົນໃໝ່ຕ້ອງແກ້ໄຂຜົນກະທົບຈາກໄພແຫ້ງແລ້ງ ທີ່ອີງການສະຫະປະຊາຊາດໄດ້ລະບຸວ່າ ປະຊາຊົນໂຊມາລີ 3,5 ລ້ານຄົນ ແມ່ນມີຄວາມສ່ຽງຕໍ່ຄວາມອຶດຢາກຢ່າງຮ້າຍແຮງ ແລະ ພາລະກິດອັນໃຫຍ່ຫລວງລໍຖ້າຢູ່ແມ່ນບັນຫາການຍາດແຍ່ງດິນແດນ ແລະ ຜົນກະທົບຈາກການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ອາຫານ.

**ແຫລ່ງຂໍ້ມູນ: BBC**



# ກອງປະຊຸມບັນດາລັດຖະມົນຕີຮັບຜິດຊອບການຄ້າ APEC

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ



ເມື່ອທ້າຍອາທິດຜ່ານມາ ໄດ້ມີລາຍງານຂ່າວວ່າ: ກອງປະຊຸມບັນດາລັດຖະມົນຕີຮັບຜິດຊອບການຄ້າ (MRT) ຂອງເວທີປາໄສເສດຖະກິດອາຊີ-ປາຊີຟິກ (APEC) ໄດ້ໄຂຂຶ້ນຢ່າງເປັນທາງການ ຢູ່ນະຄອນຫລວງບາງກອກ ປະເທດໄທ ພາຍໃຕ້ການເປັນປະທານຂອງທ່ານ ຢູຣິນ ລັກສະນະວິສິດ ຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງການຄ້າຂອງປະເທດໄທ.

ກອງປະຊຸມຄັ້ງນີ້ ໄດ້ສຳເລັດລົງດ້ວຍຜົນສຳເລັດອັນຈົບງາມ ພາຍຫລັງດຳເນີນມາເປັນເວລາ 2 ວັນ ໃນລະຫວ່າງວັນທີ 21-22 ພຶດສະພາ 2022 ເຊິ່ງມີການເຂົ້າຮ່ວມຂອງຜູ້ຕາງໜ້າທີ່ມາຈາກ 21 ປະເທດສະມາຊິກ APEC ໂດຍກອງປະຊຸມຄັ້ງນີ້ແມ່ນກອງປະຊຸມແບບເຊິ່ງໜ້າທຳອິດຂອງບັນດາລັດຖະມົນຕີການຄ້າ APEC ໃນ 3 ປີຜ່ານມາ ຫລັງຈາກບັນດາຂໍ້ຈຳກັດດ້ານການເດີນທາງໄປ-ມາ ຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ຮັບການຍົກເລີກເທື່ອລະກ້າວ.

ໂຄງການດຳເນີນງານຈຸດສຸມຂອງກອງປະຊຸມຄັ້ງນີ້ ລວມມີບັນດາບັນຫາດ້ານການຊຸກຍູ້ການຄ້າ ແລະ ການລົງທຶນໄລຍະຫລັງໂຄວິດ-19, ການຂາດຄວາມໝັ້ນຄົງດ້ານສະບຽງອາຫານ, ລາຄາພະລັງງານເພີ່ມຂຶ້ນສູງ ແລະ ການເຄື່ອນໄຫວຟື້ນຟູການທ່ອງທ່ຽວ ຫລັງໂລກລະບາດ.

**ແຫລ່ງຂ່າວ: ກອງທັບປະຊາຊົນຫວຽດນາມ (ກປ)**










# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 18 ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ**

ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ມີ ສອງກໍລະນີ ດັ່ງນີ້:

1. ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ທີ່ບໍ່ປ່ຽນປ້າຍທະບຽນ ແມ່ນການນຳເຂົ້າເພື່ອ ທ່ອງທ່ຽວ, ຢ້ຽມຢາມ, ວາງສະແດງ, ຄົ້ນຄວ້າ, ວິໄຈ, ທົດລອງ, ທົດສອບ, ສຳຫຼວດ, ອອກແບບ, ຂົນສົ່ງ ສິນຄ້າ ແລະ ຜູ້ໂດຍສານ. ຍານພາຫະນະທາງບົກທີ່ນຳເຂົ້າແບບຊົ່ວຄາວ ຕ້ອງຮັບປະກັນມາດຕະຖານເຕັກນິກ, ຄວາມປອດໄພ ແລະ ສິ່ງແວດລ້ອມ ບົນພື້ນຖານການປະຕິບັດຕາມສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບການຂົນສົ່ງທາງບົກລະຫວ່າງປະເທດ.

2. ການນຳເຂົ້າຍານພາຫະນະທາງບົກແບບຊົ່ວຄາວ ທີ່ປ່ຽນປ້າຍທະບຽນ ຕ້ອງມີສະພາບເຕັກນິກດີ ແລະ ໃຫ້ປະຕິບັດ ດັ່ງນີ້:

1). ການນຳເຂົ້າລົດ ເພື່ອຮັບໃຊ້ສຳນັກງານຜູ້ຕາງໜ້າ ຂອງຕ່າງປະເທດປະຈຳ ຢູ່ ສປປ ລາວ ຕ້ອງໄດ້ຂໍອະນຸຍາດນຳກະຊວງການຕ່າງປະເທດ ຊຶ່ງມີກຳນົດເວລານຳໃຊ້ ສອງປີ ແລະ ສາມາດຕໍ່ອາຍຸໄດ້;

2). ການນຳເຂົ້າລົດ ເພື່ອນຳໃຊ້ເຂົ້າໃນໂຄງການກໍ່ສ້າງທີ່ເປັນບຸລິມະສິດ ຂອງລັດຖະບານ ລວມທັງເຂດເສດຖະກິດພິເສດ ໃນເວລານຳເຂົ້າ ຕ້ອງມີການຮັບຮອງແຜນນຳເຂົ້າຈາກຂະແໜງການທີ່ກ່ຽວຂ້ອງ.

ຍານພາຫະນະທາງບົກທີ່ນຳເຂົ້າແບບຊົ່ວຄາວ ພາຍຫຼັງສຳເລັດການປະຕິບັດໜ້າທີ່ວຽກງານແລ້ວ ໃຫ້ນຳລົດດັ່ງກ່າວອອກຄືນ, ຖ້າຫາກບໍ່ນຳອອກຄືນຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ມາດຕະຖານ ແລະ ເງື່ອນໄຂ ທາງດ້ານເຕັກນິກຂອງຍານພາຫະນະທາງບົກ**

ຍານພາຫະນະທາງບົກທີ່ຈະນຳເຂົ້າ ສປປ ລາວ ຕ້ອງມີຄຸນນະພາບຖືກຕ້ອງຕາມມາດຕະຖານເຕັກນິກທີ່ ສປປລາວ ຮັບຮູ້ ແລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ພວງມະໄລຊ້າຍ, ຍົກເວັ້ນການນຳເຂົ້າຊົ່ວຄາວ;
2. ລົດຈັກ ທີ່ມີຄວາມແຮງບໍ່ເກີນ ໜຶ່ງພັນຫົກຮ້ອຍ ຊີຊີ;
3. ມາດຕະຖານຄວາມປອດໄພ ແລະ ສິ່ງແວດລ້ອມ.

**ມາດຕາ 20 ການຄົດສົມການນຳໃຊ້ຍານພາຫະນະທາງບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການນຳໃຊ້ຍານພາຫະນະທາງບົກ ເພື່ອຫລຸດຜ່ອນຄວາມໜາແໜ້ນຂອງການຈະລາຈອນ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລ້ວສະເໜີລັດຖະບານ ພິຈາລະນາດຸດສົມການນຳໃຊ້ຍານພາຫະນະທາງບົກໃນແຕ່ລະໄລຍະ.

## ໝວດທີ 3
## ການນຳເຂົ້າ ຊິ້ນສ່ວນ ແລະ ອາໄຫຼ່

**ມາດຕາ 21 ການນຳເຂົ້າຊິ້ນສ່ວນຍານພາຫະນະທາງບົກ**

ຊິ້ນສ່ວນຍານພາຫະນະທາງບົກ ທີ່ອະນຸຍາດໃຫ້ນຳເຂົ້າ ມີ ສາມຮູບແບບ ດັ່ງນີ້:

1. ຊີເຄດີ (Completely Knocked Down-CKD) ແມ່ນການນຳເຂົ້າຊິ້ນສ່ວນຢູ່ໃນຮູບຮ່າງລັກ ສະນະທີ່ແກະ ແລະ ແຍກອອກຈາກກັນລະອຽດ ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ, ເວັ້ນເສຍແຕ່ພາກສ່ວນຈັກ ຫຼື ໝໍ້ໄຟ ເພື່ອປະກອບຢູ່ໂຮງງານໃນ ສປປລາວ;

2. ໄອເຄດີ (Incompletely Knocked Down-IKD) ແມ່ນການນຳເຂົ້າຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນແບບ (CKD) ເພື່ອປະກອບຢູ່ໂຮງງານແຕ່ບໍ່ຄົບຊຸດ ຊຶ່ງມີຊິ້ນສ່ວນ ແລະ ອາໄຫຼ່ຈຳນວນໜຶ່ງ ໄດ້ຮັບການຜະລິດ ແລະ ຕົບແຕ່ງຢູ່ພາຍໃນປະເທດ;

3. ເອັສເຄດີ (Semi Knocked Down-SKD) ແມ່ນການນຳເຂົ້າຊິ້ນສ່ວນທີ່ບໍ່ແມ່ນຊິ້ນສ່ວນດຽວຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນບໍ່ລະອຽດໂດຍປະມານ ຫ້າສິບສ່ວນຮ້ອຍ (50%) ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ.

ຊິ້ນສ່ວນຍານພາຫະນະທາງບົກທີ່ນຳເຂົ້າ ຕ້ອງຮັບໃຊ້ສະເພາະໂຮງງານຜະລິດ ແລະ ປະກອບຍານພາ ຫະນະທາງບົກ ທີ່ໄດ້ຮັບອະນຸຍາດເທົ່ານັ້ນ.

**ມາດຕາ 22 ຄຸນນະພາບຊິ້ນສ່ວນຍານພາຫະນະທາງບົກ**

ຊິ້ນສ່ວນຍານພາຫະນະທາງບົກ ທີ່ຈະນຳເຂົ້າ ຕ້ອງເປັນຊິ້ນສ່ວນໃໝ່ ແລະ ມີໃບຢັ້ງຢືນຄຸນນະພາບຈາກໂຮງງານຜະລິດ, ໃນກໍລະນີບໍ່ມີສົນທິສັນຍາຮັບຮູ້ຊຶ່ງກັນ ແລະ ກັນ ກະຊວງໂຍທາທິການ ແລະ ຂົນສົ່ງ ຕ້ອງປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ ສາມາດຮຽກໃຫ້ໂຮງງານຜະລິດ ສົ່ງເອກະສານລາຍງານກ່ຽວກັບການທົດສອບ ແລະ/ຫຼື ກວດກາຂະບວນການຜະລິດຂອງໂຮງງານໃນປະເທດຕົ້ນທາງ ເພື່ອຮັບຮູ້ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂະບວນການຜະລິດ (COP) ຈຶ່ງອະນຸຍາດໃຫ້ນຳເຂົ້າໄດ້.

**ມາດຕາ 23 ການນຳເຂົ້າອາໄຫຼ່ຍານພາຫະນະທາງບົກ**

ການນຳເຂົ້າອາໄຫຼ່ຍານພາຫະນະທາງບົກ ຕ້ອງປະຕິບັດ ດັ່ງນີ້:

1. ອາໄຫຼ່ໃໝ່ ຕ້ອງມີໃບຢັ້ງຢືນຄຸນນະພາບຈາກໂຮງງານຜະລິດ, ສຳລັບການນຳເຂົ້າ ຖັງລົດ, ຊາຊີ ແລະ ໜ່ວຍຈັກ ຕ້ອງໄດ້ຂໍອະນຸຍາດຈາກກະຊວງໂຍທາທິການ ແລະ ຂົນສົ່ງ;

2. ອາໄຫຼ່ທີ່ນຳໃຊ້ແລ້ວ ຕ້ອງໄດ້ຂໍອະນຸຍາດນຳເຂົ້າຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

ການອະທິບາຍຄຳສັບ ໃນມາດຕາ 4 (ປັບປຸງ) ຂອງກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ມີທັງໝົດ 12 ຂໍ້. ໜັງສືພິມຜູ້ແທນປະຊາຊົນ ສະບັບນີ້ ຈະນຳສະເໜີຕໍ່ບັນດາທ່ານຜູ້ອ່ານ 2 ຂໍ້ ແລະ ອີກ 10 ຂໍ້ ຈະພິມໃນສະບັບຕໍ່ໆໄປ

1. ພົນລະເມືອງ ໝາຍເຖິງ ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສປປລາວ;

2. ນິຕິບຸກຄົນ ໝາຍເຖິງ ການຈັດຕັ້ງ ຫລື ອົງການ ທີ່ຂຶ້ນທະບຽນວິສາຫະກິດຊຶ່ງມີຊື່, ສະຖານທີ່ຕັ້ງສຳນັກງານ, ມີຊັບສົມບັດເປັນຂອງຕົນເອງ, ມີສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;










| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສິງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພິດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |